ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 146 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 22 ມັງກອນ 2019

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ຄົນພິການ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ, ສະບັບເລກທີ 111/ສພຊ, ລົງວັນທີ 10 ທັນວາ 2018 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ຄົນພິການ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ສະບັບເລກທີ 03/ຄປຈ, ລົງວັນທີ 08 ມັງກອນ 2019.

ປະທານປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍ ຄົນພິການ.

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ບຸນຍັງ ວໍລະຈິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 111 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 10 / 12 / 18

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍຄົນພິການ

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍຄົນພິການ ໃນວາລະກອງປະຊຸມ ຄັ້ງວັນທີ 10 ທັນວາ 2018.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍຄົນພິການ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 57 / ສພຊ
ນະຄອນຫຼວງວຽງຈັນ, ວັນທີ 10 ທັນວາ 2018

# ກົດໝາຍ
# ວ່າດ້ວຍຄົນພິການ

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມ ກວດກາ ວຽກງານຄົນພິການ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຄົນພິການ, ລົບລ້າງທຸກການຈຳແນກຕໍ່ຄົນພິການ, ສ້າງເງື່ອນໄຂໃຫ້ຄົນພິການ ໄດ້ຮັບການພັດທະນາຕົນເອງ, ເພິ່ງຕົນເອງ ແລະ ສາມາດເຂົ້າຮ່ວມກິດຈະກຳທາງສັງຄົມ ແນໃສ່ຮັບປະກັນໃຫ້ຄົນພິການ ມີຄວາມສະເໝີພາບທາງດ້ານ ການເມືອງ, ກົດໝາຍ, ເສດຖະກິດ, ວັດທະນະທຳ, ສັງຄົມ ແລະ ຄອບຄົວ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

### ມາດຕາ 2 ຄົນພິການ

ຄົນພິການ ແມ່ນ ບຸກຄົນທີ່ມີຄວາມບົກພ່ອງທາງດ້ານ ຮ່າງກາຍ, ການເບິ່ງເຫັນ, ການໄດ້ຍິນ ແລະ ການປາກເວົ້າ, ສະຕິປັນຍາ, ຄວາມຈື່ຈຳ ແລະ ດ້ານອື່ນ ບວກກັບສິ່ງກີດຂວາງ ຊຶ່ງເປັນອຸປະສັກໃນການເຄື່ອນໄຫວຊີວິດປະຈຳວັນ, ການຮຽນຮູ້ ແລະ ການເຂົ້າຮ່ວມກິດຈະກຳທາງສັງຄົມ ໄດ້ຢ່າງເຕັມສ່ວນ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບ ທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ສິ່ງກີດຂວາງ ໝາຍເຖິງ ສະພາບແວດລ້ອມ ທີ່ບໍ່ມີສິ່ງອຳນວຍຄວາມສະດວກຂັ້ນພື້ນຖານ ສຳລັບຄົນພິການ ເປັນຕົ້ນ ທາງຍ່າງ, ທາງເປີນ, ຮາວຈັບ, ຫ້ອງນ້ຳ, ລົດ, ບ່ອນພັກຜ່ອນ, ສະຖານທີ່ຈອດລົດ, ສັນຍາລັກ, ອັກສອນນູນ, ເຄື່ອງໝາຍຊີ້ບອກ; ພຶດຕິກຳ, ທັດສະນະຄະຕິຂອງ ບຸກຄົນ ແລະ ສັງຄົມ ທີ່ເປັນການຈຳແນກຄົນພິການ;

2. **ການຈຳແນກຄົນພິການ** ໝາຍເຖິງ ການປະພຶດທີ່ເປັນການ ເຢາະເຢີ້ຍ, ສຽດສີ, ກີດກັ້ນ, ຈຳກັດ, ໂດດດ່ຽວ ແລະ ປະຕິເສດ ຕໍ່ຄົນພິການ;

3. **ການສ້າງສິ່ງອຳນວຍຄວາມສະດວກ ແລະ ປອດໄພ** ໝາຍເຖິງ ການສ້າງ ແລະ ປັບປຸງ ສະພາບແວດລ້ອມ ເພື່ອອຳນວຍຄວາມສະດວກ ແລະ ປອດໄພ ໃຫ້ຄົນພິການ ເປັນຕົ້ນ ທາງຍ່າງ, ທາງເນີນ, ຮາວຈັບ, ຫ້ອງນ້ຳ, ລິບ, ບ່ອນພັກຜ່ອນ, ສະຖານທີ່ຈອດລົດ, ສັນຍາລັກ, ອັກສອນນູນ, ເຄື່ອງໝາຍຊີ້ບອກ;

4. **ເຄື່ອງຄ້ຳຊູ** ໝາຍເຖິງ ອຸປະກອນທີ່ນຳໃຊ້ ສຳລັບການເຄື່ອນໄຫວກິດຈະກຳ ແລະ ການດຳລົງຊີວິດຂອງຄົນພິການ ເປັນຕົ້ນ ອົງຄະທຽມ, ຫູາຍຂາທຽມ, ໄມ້ຄ້ຳເທົ້າ;

5. **ເຄື່ອງຊ່ວຍຊູ** ໝາຍເຖິງ ອຸປະກອນທີ່ນຳໃຊ້ ສຳລັບການເຄື່ອນໄຫວກິດຈະກຳ ແລະ ການດຳລົງຊີວິດ ຂອງຄົນພິການ ເປັນຕົ້ນ ລໍ້ເລື່ອນ, ລໍ້ໂຍກ, ຫູາບເລົາກົງ;

6. **ສະຖານທີ່ສາທາລະນະ** ໝາຍເຖິງ ສະຖານທີ່ທີ່ມີທຸກຄົນສາມາດເຂົ້າເຖິງ ແລະ ນຳໃຊ້ ເປັນຕົ້ນ ໂຮງຮຽນ, ໂຮງໝໍ, ວັດ, ສວນສາທາລະນະ, ແຫຼ່ງທ່ອງທ່ຽວ, ສະໜາມກິລາ, ສະໜາມບິນ, ທ່າເຮືອ, ຕະຫຼາດ, ສະຖານທີ່ຈອດລົດ, ປໍ້ານ້ຳມັນ, ສະຖານທີ່ຈັດງານ, ທະນາຄານ;

7. **ການເຂົ້າເຖິງ** ໝາຍເຖິງ ການໄດ້ຮັບການບໍລິການ ໂດຍປາສະຈາກການຂັດຂວາງ, ສິ່ງກີດຂວາງ ດ້ານສະພາບແວດລ້ອມ ແລະ ທັດສະນະຄະຕິ.

### ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານຄົນພິການ

ລັດ ຖືສຳຄັນວຽກງານຄົນພິການ ດ້ວຍການປະກອບສ່ວນງົບປະມານ, ວັດຖຸປະກອນທີ່ຈຳເປັນ ແລະ ສິ່ງອຳນວຍຄວາມສະດວກໃຫ້ແກ່ວຽກງານຄົນພິການ ເພື່ອໃຫ້ວຽກງານດັ່ງກ່າວ ມີຄວາມເຂັ້ມແຂງ ແລະ ສາມາດເຄື່ອນໄຫວ ຢ່າງມີປະສິດທິພາບ ແລະ ມີປະສິດທິຜົນ.

ລັດ ຊຸກຍູ້ ແລະ ສົ່ງເສີມ ໃຫ້ຄົນພິການມີອາຊີບທີ່ເໝາະສົມ, ມີການສ້າງຕັ້ງການຈັດຕັ້ງສັງຄົມ ຂອງຄົນພິການ ແລະ ກອງທຶນຄົນພິການ ພ້ອມທັງສຶກສາອົບຮົມ ແລະ ປຸກຈິດສຳນຶກໃຫ້ສັງຄົມ ເຂົ້າໃຈ, ຊ່ວຍເຫຼືອ ແລະ ປົກປ້ອງສິດທິຂອງຄົນພິການ.

ລັດ ຊຸກຍູ້ ແລະ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ການຊ່ວຍເຫຼືອ ແລະ ສ້າງສິ່ງອຳນວຍຄວາມສະດວກຂັ້ນພື້ນຖານໃຫ້ແກ່ຄົນພິການ, ປະກອບສ່ວນດ້ານທຶນຮອນ ແລະ ເຕັກນິກວິຊາການ ເຂົ້າໃນການພັດທະນາຄົນພິການ.

### ມາດຕາ 5 ຫຼັກການ ກ່ຽວກັບວຽກງານຄົນພິການ

ວຽກງານຄົນພິການ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
2. ຄຸ້ມຄອງ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ຮັບປະກັນສິດສະເໝີພາບທາງດ້ານ ການເມືອງ, ກົດໝາຍ, ເສດຖະກິດ, ວັດທະນະທຳ, ສັງຄົມ ແລະ ຄອບຄົວ ລະຫວ່າງຄົນພິການ ກັບຄົນອື່ນ;
4. ຮັບປະກັນບໍ່ໃຫ້ມີການ ຈຳແນກ, ໃຊ້ຄວາມຮຸນແຮງ, ລ່ວງລະເມີດທາງ ເພດ, ຮ່າງກາຍ, ຈິດໃຈ, ກຽດສັກສີ ລວມທັງການສະແຫວງຫາຜົນປະໂຫຍດຈາກຄົນພິການ;

5. ເຄົາລົບ ຄວາມສະເໝີພາບຍິງ-ຊາຍ, ຄວາມສາມາດ, ຄວາມແຕກຕ່າງ ແລະ ຍອມຮັບຄົນພິການ ເປັນສ່ວນໜຶ່ງ ໃນຄວາມຫຼາກຫຼາຍຂອງມະນຸດ;

6. ມີສ່ວນຮ່ວມຂອງຄົນພິການ ແລະ ທຸກພາກສ່ວນໃນສັງຄົມ ເຂົ້າໃນການປົກປ້ອງ, ຊ່ວຍເຫຼືອ ແລະ ພັດທະນາຄົນພິການ;

7. ປະຕິບັດສົນທິສັນຍາ ແລະ ສັນຍາ ສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 6 ພັນທະ ກ່ຽວກັບວຽກງານຄົນພິການ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພັນທະເຄົາລົບ ຄວາມສະເໝີພາບ ແລະ ສິດ ຂອງຄົນພິການ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ, ກົດໝາຍ ພ້ອມທັງປະກອບສ່ວນ ແລະ ເຂົ້າຮ່ວມໃນວຽກງານຄົນພິການ.

**ມາດຕາ 7 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ຄົນພິການ ລວມທັງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນກັບວຽກງານຄົນພິການ ຢູ່ ສປປ ລາວ.

**ມາດຕາ 8 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄົນພິການ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ວິທະຍາສາດ, ເຕັກໂນໂລຊີ, ການພັດທະນາຊັບພະຍາກອນມະນຸດ ເພື່ອພັດທະນາວຽກງານຄົນພິການ, ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ປະເພດ ແລະ ສະຖິຕິ ຄົນພິການ
### ໝວດທີ 1
### ປະເພດຄົນພິການ

**ມາດຕາ 9 ປະເພດຄົນພິການ**

ປະເພດຄົນພິການ ມີ ດັ່ງນີ້:

1. ທາງດ້ານຮ່າງກາຍ;
2. ທາງດ້ານການເບິ່ງເຫັນ;
3. ທາງດ້ານການໄດ້ຍິນ ແລະ ການປາກເວົ້າ;
4. ທາງດ້ານສະຕິປັນຍາ;
5. ທາງດ້ານຄວາມຈື່ຈຳ;
6. ທາງດ້ານອື່ນ.

**ມາດຕາ 10 ຄົນພິການທາງດ້ານຮ່າງກາຍ**

ຄົນພິການທາງດ້ານຮ່າງກາຍ ແມ່ນ ບຸກຄົນທີ່ມີຄວາມບົກພ່ອງທາງດ້ານໂຄງສ້າງຂອງຮ່າງກາຍ ຊຶ່ງພາໃຫ້ມີຄວາມຫຍຸ້ງຍາກໃນການເຄື່ອນໄຫວ ລວມທັງຄວາມບົກພ່ອງ ຫຼື ການສູນເສຍ ໜ້າທີ່ການຂອງອົງຄະ ເປັນຕົ້ນ ແຂນ, ຂາ.

**ມາດຕາ 11 ຄົນພິການທາງດ້ານການເບິ່ງເຫັນ**

ຄົນພິການທາງດ້ານການເບິ່ງເຫັນ ແມ່ນ ບຸກຄົນທີ່ມີຄວາມບົກພ່ອງ ຫຼື ສູນເສຍຄວາມສາມາດ ໃນການເບິ່ງເຫັນ ເປັນຕົ້ນ ຕາບອດສະໜິດ, ຕາບອດສີ, ຕາຟາງ ຊຶ່ງພາໃຫ້ມີຄວາມຫຍຸ້ງຍາກໃນການເບິ່ງເຫັນ.

**ມາດຕາ 12 ຄົນພິການທາງດ້ານການໄດ້ຍິນ ແລະ ການປາກເວົ້າ**

ຄົນພິການທາງດ້ານການໄດ້ຍິນ ແລະ ການປາກເວົ້າ ແມ່ນ ບຸກຄົນທີ່ມີຄວາມບົກພ່ອງ ຫຼື ສູນເສຍຄວາມສາມາດ ໃນການໄດ້ຍິນ ແລະ ການປາກເວົ້າ ເປັນຕົ້ນ ຫູໜວກ, ຫູຕຶງ, ປາກກືກ, ປາກບ່ຳ, ປາກອອກສຽງບໍ່ແຈ້ງ ຊຶ່ງພາໃຫ້ມີຄວາມຫຍຸ້ງຍາກໃນການໄດ້ຍິນ ແລະ ການສື່ສານ.

**ມາດຕາ 13 ຄົນພິການທາງດ້ານສະຕິປັນຍາ**

ຄົນພິການທາງດ້ານສະຕິປັນຍາ ແມ່ນ ບຸກຄົນທີ່ມີການພັດທະນາທາງສະໝອງຊ້າກວ່າປົກກະຕິ, ມີຂໍ້ຈຳກັດ ໃນການເຄື່ອນໄຫວຊີວິດປະຈຳວັນ ຫຼື ການເຂົ້າຮ່ວມໃນກິດຈະກຳທາງສັງຄົມ.

**ມາດຕາ 14 ຄົນພິການທາງດ້ານຄວາມຈື່ຈຳ**

ຄົນພິການທາງດ້ານຄວາມຈື່ຈຳ ແມ່ນ ບຸກຄົນທີ່ມີສະຕິບໍ່ສົມບູນ ເປັນຕົ້ນ ການຮຽນຮູ້, ການຮັບຮູ້ ແລະ ອາລົມຈິດ ທີ່ມີການປ່ຽນແປງຕະຫຼອດ.

## ໝວດທີ 2
## ສະຖິຕິ ແລະ ການຂຶ້ນທະບຽນ ຄົນພິການ

**ມາດຕາ 15 ສະຖິຕິ**

ສະຖິຕິຄົນພິການ ແມ່ນ ຂໍ້ມູນ ແລະ ຕົວເລກ ທີ່ສະແດງເຖິງສະພາບຄວາມເປັນຈິງ ກ່ຽວກັບຄົນພິການ ໃນແຕ່ລະໄລຍະ ເປັນຕົ້ນ ຈຳນວນ ແລະ ປະເພດ, ທີ່ຢູ່ອາໄສ, ເພດ, ອາຍຸ, ການສຶກສາ, ການມີວຽກເຮັດງານທຳ, ຊີວິດການເປັນຢູ່ ຂອງຄົນພິການ ເພື່ອໃຊ້ເປັນບ່ອນອີງໃນການຄຸ້ມຄອງ ແລະ ພັດທະນາວຽກງານຄົນພິການ.

**ມາດຕາ 16 ການເກັບກຳສະຖິຕິ**

ການເກັບກຳສະຖິຕິຄົນພິການ ແມ່ນ ການບັນທຶກຂໍ້ມູນກ່ຽວກັບຄົນພິການ ໂດຍຜ່ານຂະບວນການສຳຫຼວດ, ເກັບກຳ, ສັງລວມ, ປຸງແຕ່ງ, ວິໄຈ ແລະ ວິເຄາະ ຕາມຫຼັກວິທະຍາສາດທາງດ້ານສະຖິຕິ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສະຖິຕິ.

**ມາດຕາ 17 ການຂຶ້ນທະບຽນຄົນພິການ**

ການຂຶ້ນທະບຽນຄົນພິການ ແມ່ນ ການບັນທຶກເອົາຂໍ້ມູນຄົນພິການ ທີ່ເປັນພົນລະເມືອງລາວ ເຂົ້າໃນລະບົບການຄຸ້ມຄອງ ແລະ ຕິດຕາມ ຄົນພິການ ຂອງອົງການຄຸ້ມຄອງວຽກງານຄົນພິການ.

ໃນການຂຶ້ນທະບຽນຄົນພິການນັ້ນ ອົງການຄຸ້ມຄອງວຽກງານຄົນພິການ ຕ້ອງປະສານສົມທົບກັບຂະແໜງການພາຍໃນ, ຂະແໜງການປ້ອງກັນຄວາມສະຫງົບ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 18 ບັດຄົນພິການ**

ບັດຄົນພິການ ແມ່ນ ເອກະສານທີ່ຢັ້ງຢືນສະຖານະພາບຂອງຄົນພິການ ຊຶ່ງເປັນພົນລະເມືອງລາວທີ່ປະກອບມີຂໍ້ມູນຂອງຄົນພິການ ເປັນຕົ້ນ ຊື່ ແລະ ນາມສະກຸນ, ວັນ, ເດືອນ, ປີ ເກີດ, ເພດ, ທີ່ຢູ່ອາໄສ, ປະເພດຄົນພິການ.

## ພາກທີ III
## ຄວາມສະເໝີພາບ, ສິດ ແລະ ພັນທະ ຂອງຄົນພິການ
### ໝວດທີ 1
### ຄວາມສະເໝີພາບຂອງຄົນພິການ

**ມາດຕາ 19 ຄວາມສະເໝີພາບຂອງຄົນພິການ**

ຄົນພິການໂດຍບໍ່ຈຳແນກ ເພດ, ໄວ, ຖານະທາງສັງຄົມ, ລະດັບການສຶກສາ, ຄວາມເຊື່ອຖື ແລະ ຊົນເຜົ່າ ລວມທັງສາເຫດຂອງຄວາມພິການ ລ້ວນແຕ່ມີຄວາມສະເໝີພາບກັບຄົນອື່ນທາງດ້ານ ການເມືອງ, ກົດໝາຍ, ເສດຖະກິດ, ວັດທະນະທຳ, ສັງຄົມ, ຄອບຄົວ ແລະ ຄວາມສະເໝີພາບທາງດ້ານອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 20 ຄວາມສະເໝີພາບທາງດ້ານການເມືອງ**

ຄົນພິການ ມີຄວາມສະເໝີພາບທາງດ້ານການເມືອງ ເຊັ່ນ ການເລືອກຕັ້ງ, ການສະໝັກຮັບເລືອກຕັ້ງ, ການເຂົ້າຮ່ວມເຄື່ອນໄຫວວຽກງານ, ປຶກສາຫາລື, ຕົກລົງບັນຫາສຳຄັນຂອງຊາດ, ໄດ້ຮັບການແຕ່ງຕັ້ງໃຫ້ດຳລົງຕຳແໜ່ງໃດໜຶ່ງ ຕາມມາດຕະຖານ, ເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 21 ຄວາມສະເໝີພາບທາງດ້ານກົດໝາຍ**

ຄົນພິການ ມີຄວາມສະເໝີພາບທາງດ້ານກົດໝາຍ ຢ່າງເທົ່າທຽມກັນກັບຄົນອື່ນ ໃນການສະເໜີ, ການຮ້ອງຟ້ອງ ແລະ ການຮ້ອງຂໍຄວາມເປັນທຳ ລວມທັງການເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ ແລະ ກົດໝາຍ.

**ມາດຕາ 22 ຄວາມສະເໝີພາບທາງດ້ານເສດຖະກິດ, ວັດທະນະທຳ, ສັງຄົມ**

ຄົນພິການ ມີຄວາມສະເໝີພາບ ໃນການເຄື່ອນໄຫວທາງດ້ານເສດຖະກິດ, ວັດທະນະທຳ, ສັງຄົມ ເຊັ່ນ ການສຶກສາ, ສາທາລະນະສຸກ, ການດຳເນີນທຸລະກິດ, ການຄ້າ, ການບໍລິການ, ການເຄື່ອນໄຫວ ກິລາ-ກາຍ

ຍະກຳ, ສິລະປະວັນນະຄະດີ, ຮີດຄອງປະເພນີ, ຄົ້ນຄວ້າປະດິດສ້າງທາງດ້ານເຕັກນິກ, ວິທະຍາສາດ ຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງ.

**ມາດຕາ 23 ຄວາມສະເໝີພາບທາງດ້ານຄອບຄົວ**

ຄົນພິການ ມີຄວາມສະເໝີພາບ ແລະ ເທົ່າທຽມກັບສະມາຊິກທຸກຄົນໃນຄອບຄົວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 24 ຄວາມສະເໝີພາບໃນກໍລະນີ ສຸກເສີນ ແລະ ມີຄວາມສ່ຽງ**

ໃນກໍລະນີ ສຸກເສີນ ແລະ ມີຄວາມສ່ຽງ ທາງທຳມະຊາດ ຫຼື ສັງຄົມ ຄົນພິການ ຕ້ອງໄດ້ຮັບການປົກປ້ອງ ແລະ ຊ່ວຍເຫຼືອດ້ານມະນຸດສະທຳ ຢ່າງສະເໝີພາບກັບຄົນອື່ນ.

## ໝວດທີ 2
## ສິດ ແລະ ພັນທະ ຂອງຄົນພິການ

**ມາດຕາ 25 ສິດຂອງຄົນພິການ**

ຄົນພິການ ມີ ສິດພື້ນຖານ ດັ່ງນີ້:

1. ດຳລົງຊີວິດຢ່າງເປັນເອກະລາດ, ປອດໄພ ແລະ ຢູ່ຮ່ວມກັບຊຸມຊົນຢ່າງເທົ່າທຽມ;
2. ໄດ້ຮັບການດູແລ, ປິ່ນປົວ ແລະ ຟື້ນຟູສຸຂະພາບ;
3. ໄດ້ຮັບການປົກປ້ອງຈາກການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ ຈິດໃຈ;
4. ໄດ້ຮັບການສຶກສາ, ຝຶກວິຊາຊີບ, ມີວຽກເຮັດງານທຳ, ສະຫວັດດີການສັງຄົມ, ເຄື່ອນໄຫວ ກິລາ-ກາຍຍະກຳ, ສິລະປະວັນນະຄະດີ, ວັດທະນະທຳ, ເຂົ້າເຖິງອາຄານ ສະຖານທີ່, ການຂົນສົ່ງສາທາລະນະ ແລະ ຂໍ້ມູນ ຂ່າວສານ;
5. ໄດ້ຮັບການສົ່ງເສີມໃນການນຳໃຊ້ຫົວຄິດປະດິດສ້າງ ແລະ ພອນສະຫວັນຂອງຕົນ ເຂົ້າໃນການຄົ້ນຄວ້າ ວິທະຍາສາດ, ເຕັກໂນໂລຊີທັນສະໄໝ ແລະ ຜະລິດວັດຖຸປະກອນ ຮັບໃຊ້ສັງຄົມ;
6. ປະກອບຄຳເຫັນທີ່ພົວພັນເຖິງສິດ ແລະ ຜົນປະໂຫຍດຂອງຕົນ ລວມທັງຜົນປະໂຫຍດຂອງປະເທດຊາດ ແລະ ສັງຄົມ;
7. ໄດ້ຮັບການຍົກເວັ້ນ ຫຼື ຫຼຸດຜ່ອນ ອາກອນ, ຄ່າທຳນຽມ, ຄ່າບໍລິການ ແລະ ພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
8. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 26 ພັນທະຂອງຄົນພິການ**

ຄົນພິການ ມີພັນທະ ເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕາມຄວາມຮູ້ຄວາມສາມາດ ແລະ ເງື່ອນໄຂຕົວຈິງຂອງຕົນ.

## ພາກທີ IV

## ການປົກປ້ອງ ແລະ ພັດທະນາ ຄົນພິການ

### ໝວດທີ 1

### ການປ້ອງກັນບໍ່ໃຫ້ເກີດຄວາມພິການ, ການປິ່ນປົວ ແລະ ການຟື້ນຟູສຸຂະພາບ

**ມາດຕາ 27 ການປ້ອງກັນບໍ່ໃຫ້ເກີດຄວາມພິການ**

ການປ້ອງກັນບໍ່ໃຫ້ເກີດຄວາມພິການ ແມ່ນ ຂະບວນການເຄື່ອນໄຫວ ເພື່ອບໍ່ໃຫ້ເກີດຄວາມພິການ ໂດຍ ກຳເນີດ, ພະຍາດ, ອຸບັດຕິເຫດ ຫຼື ສາເຫດອື່ນ.

ການປ້ອງກັນບໍ່ໃຫ້ເກີດຄວາມພິການ ໃຫ້ປະຕິບັດ ດັ່ງນີ້:

1. ໂຄສະນາປຸກຈິດສຳນຶກ ກ່ຽວກັບການປ້ອງກັນບໍ່ໃຫ້ເກີດຄວາມພິການ;
2. ໃຫ້ການແນະນຳ ແລະ ເບິ່ງແຍງທາງການແພດ ເປັນຕົ້ນ ກ່ອນຖືພາ, ກຳລັງຖືພາ, ອອກລູກ ແລະ ຫຼັງອອກລູກ;
3. ໃຫ້ວັກຊີນກັນພະຍາດ;
4. ປະຕິບັດນະໂຍບາຍໂພຊະນາການ ເພື່ອຄວາມຈະເລີນເຕີບໂຕຂອງເດັກ;
5. ປິ່ນປົວ ແລະ ຟື້ນຟູສຸຂະພາບ ໃຫ້ຖືກຕ້ອງ, ທັນເວລາ;
6. ປ້ອງກັນບໍ່ໃຫ້ເກີດ ອຸບັດຕິເຫດຕາມເສັ້ນທາງ, ອຸບັດຕິເຫດແຮງງານ, ອຸບັດຕິເຫດຈາກລະເບີດບໍ່ທັນແຕກ ແລະ ອຸບັດຕິເຫດອື່ນ.

**ມາດຕາ 28 ການປິ່ນປົວສຸຂະພາບ**

ຄົນພິການ ໄດ້ຮັບການປິ່ນປົວສຸຂະພາບ ເປັນຕົ້ນ ການກັນພະຍາດ, ການກວດ ແລະ ວິເຄາະພະຍາດ ຢູ່ໂຮງໝໍ, ສຸກສາລາ, ຫ້ອງກວດພະຍາດ ແລະ ສະຖານທີ່ບຳບັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

ຄົນພິການ ທີ່ທຸກຍາກ, ອະນາຖາ ແລະ ຄົນພິການທີ່ບໍ່ສາມາດຊ່ວຍຕົນເອງໄດ້ ແລະ ບໍ່ມີຜູ້ດູແລ ຈະໄດ້ຮັບການຍົກເວັ້ນ ຄ່າບໍລິການປິ່ນປົວ.

**ມາດຕາ 29 ການຟື້ນຟູສຸຂະພາບ**

ຄົນພິການ ໄດ້ຮັບການຟື້ນຟູ, ການບຳບັດທາງດ້ານ ຮ່າງກາຍ ແລະ ຈິດໃຈ, ການບໍລິການດ້ານການຜ່າຕັດ, ດັດແປງ ແລະ ຕົບແຕ່ງ ຮ່າງກາຍ, ການສະໜອງ ອຸປະກອນ, ເຄື່ອງຄ້ຳຊູ ແລະ ເຄື່ອງຊ່ວຍຊູ ຕາມຫຼັກການແພດ.

ໃນການຟື້ນຟູສຸຂະພາບ ຕ້ອງມີການປະສານສົມທົບກັນ ຕາມແຕ່ລະກໍລະນີ ເປັນຕົ້ນ ການຟື້ນຟູ ຢູ່ໂຮງໝໍ, ສູນການແພດຟື້ນຟູໜ້າທີ່ການ, ການຟື້ນຟູ ຢູ່ ຊຸມຊົນ ແລະ ຄອບຄົວ.

ຄົນພິການ ທີ່ທຸກຍາກ, ອະນາຖາ ແລະ ຄົນພິການທີ່ບໍ່ສາມາດຊ່ວຍຕົນເອງໄດ້ ແລະ ບໍ່ມີຜູ້ດູແລ ຈະໄດ້ຮັບການຍົກເວັ້ນ ຄ່າບໍລິການຟື້ນຟູ, ບຳບັດ, ອຸປະກອນ, ເຄື່ອງຄ້ຳຊູ ແລະ ເຄື່ອງຊ່ວຍຊູ.

## ໝວດທີ 2
## ການສຶກສາ ແລະ ກິລາ

### ມາດຕາ 30 ການສຶກສາຮຽນຮ່ວມ

ການສຶກສາຮຽນຮ່ວມ ສຳລັບຄົນພິການ ໃຫ້ປະຕິບັດ ດັ່ງນີ້:

1. ຄົນພິການ ສາມາດຮຽນຮ່ວມກັບຄົນອື່ນ ຢູ່ສະຖານການສຶກສາຂອງລັດ ແລະ ເອກະຊົນ ຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງ;
2. ສະຖານການສຶກສາ ທີ່ມີຄົນພິການຮຽນຮ່ວມ ຕ້ອງປະກອບສິ່ງອຳນວຍຄວາມສະດວກທີ່ຈຳເປັນ ສຳລັບຄົນພິການ ຄື:
    - ຫ້ອງຮຽນ ແລະ ສະຖານທີ່ຮຽນ ທີ່ເໝາະສົມ;
    - ຫຼັກສູດການຮຽນ-ການສອນ ທີ່ສອດຄ່ອງກັບປະເພດຄົນພິການ;
    - ວັດຖຸປະກອບ ແລະ ສື່ການຮຽນ-ການສອນ ທີ່ເໝາະສົມ;
    - ສະພາບແວດລ້ອມທີ່ເອື້ອອຳນວຍ ພາຍໃນສະຖານການສຶກສາ.
3. ສະຖານການສຶກສາ ທີ່ມີຄົນພິການຮຽນຮ່ວມ ຕ້ອງຄົ້ນຄວ້າ ວິທີການຮຽນ-ການສອນ, ບັນຈຸຄູສອນ ແລະ ຜູ້ດູແລນັກຮຽນພິການ ໃຫ້ເໝາະສົມ.

### ມາດຕາ 31 ການຊ່ວຍເຫຼືອສະເພາະດ້ານໃນການສຶກສາ ເພື່ອຄົນພິການ

ຄົນພິການ ດ້ານສະຕິປັນຍາ, ຄວາມຈື່ຈຳ, ການເບິ່ງເຫັນ, ການໄດ້ຍິນ ແລະ ການປາກເວົ້າ ຕ້ອງໄດ້ຮັບການຊ່ວຍເຫຼືອສະເພາະດ້ານໃນການສຶກສາ ຕາມແຕ່ລະກໍລະນີ ເປັນຕົ້ນ ຫຼັກສູດ, ຄູສອນ, ພາສາມື, ອັກສອນນູນ, ໂປຣແກຣມສຽງ, ວັດຖຸປະກອບ, ສື່ ແລະ ສິ່ງອຳນວຍສະດວກ ສຳລັບການຮຽນ-ການສອນ.

### ມາດຕາ 32 ການໃຊ້ຈ່າຍໃນການສຶກສາຂອງຄົນພິການ

ສະຖານການສຶກສາ ທັງພາກລັດ ແລະ ເອກະຊົນ ຕ້ອງປະຕິບັດນະໂຍບາຍ ຍົກເວັ້ນ ຫຼື ຫຼຸດຜ່ອນຄ່າທຳນຽມ ແລະ ຄ່າໃຊ້ຈ່າຍໃນການຮຽນ ແລະ ສຶກສາ ສຳລັບຄົນພິການ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ສຳລັບນັກຮຽນພິການທີ່ຮຽນເກັ່ງ ຈະໄດ້ຮັບທຶນການສຶກສາ ແລະ ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 33 ການກິລາ-ກາຍຍະກຳ ຂອງຄົນພິການ

ຄົນພິການ ສາມາດເຄື່ອນໄຫວ ກິລາ-ກາຍຍະກຳ ຢູ່ ສະຖານທີ່ຝຶກແອບ, ສະຖານທີ່ແຂ່ງຂັນ ໂດຍບໍ່ມີການຈຳແນກ, ໄດ້ຮັບການຝຶກແອບຈາກຄູຝຶກ ແລະ ການສະໜອງວັດຖຸປະກອບຮັບໃຊ້ ກິລາ-ກາຍຍະກຳ ທີ່ເໝາະສົມ ລວມທັງເຂົ້າຮ່ວມການແຂ່ງຂັນລະດັບ ທ້ອງຖິ່ນ, ຊາດ, ພາກພື້ນ ແລະ ສາກົນ.

## ໝວດທີ 3
## ສິລະປະ, ວັດທະນະທຳ ແລະ ການພັກຜ່ອນ

### ມາດຕາ 34 ການເຂົ້າຮ່ວມສິລະປະ, ວັດທະນະທຳ

ຄົນພິການ ສາມາດເຂົ້າຮ່ວມ ແລະ ເຄື່ອນໄຫວສິລະປະ, ວັດທະນະທຳ ລວມທັງງານບຸນປະເພນີ, ໄດ້ຮັບໂອກາດ ແລະ ການສະໜອງສິ່ງອຳນວຍຄວາມສະດວກໃນການເຂົ້າຮ່ວມງານ ວາງສະແດງ ຫຼື ການແຂ່ງຂັນສິລະປະວັນນະຄະດີ, ວັດທະນະທຳ, ງານສະເຫຼີມສະຫຼອງວັນສຳຄັນຂອງຊາດ ແລະ ສາກົນ.

### ມາດຕາ 35 ການພັກຜ່ອນ

ຄົນພິການ ສາມາດພັກຜ່ອນ ດ້ວຍການເບິ່ງ ຫຼື ຟັງ ຮູບເງົາ, ໂທລະພາບ, ລະຄອນ, ລາຍການວິທະຍຸ, ເຂົ້າເຖິງ ສວນສາທາລະນະ, ສະຖານທີ່ທ່ອງທ່ຽວທາງດ້ານ ວັດທະນະທຳ, ປະຫວັດສາດ, ທຳມະຊາດ ແລະ ສະຖານທີ່ພັກຜ່ອນອື່ນ.

## ໝວດທີ 4
## ການຝຶກວິຊາຊີບ ແລະ ການມີວຽກເຮັດງານທຳ

### ມາດຕາ 36 ການຝຶກວິຊາຊີບ ແລະ ພັດທະນາສີມືແຮງງານ

ຄົນພິການ ສາມາດເຂົ້າຝຶກວິຊາຊີບ ແລະ ພັດທະນາສີມືແຮງງານ ຢູ່ສະຖານຝຶກວິຊາຊີບ ແລະ ສູນພັດທະນາສີມືແຮງງານຂອງ ລັດ ແລະ ເອກະຊົນ ຕາມຄວາມເໝາະສົມ.

ສະຖານທີ່ຝຶກວິຊາຊີບ ແລະ ສູນພັດທະນາສີມືແຮງງານ ຕ້ອງສ້າງສິ່ງອຳນວຍຄວາມສະດວກໃຫ້ເໝາະສົມ ແລະ ສອດຄ່ອງກັບຈຸດພິເສດຂອງຄົນພິການ ເປັນຕົ້ນ ສະຖານທີ່, ວັດຖຸປະກອນ, ຫຼັກສູດ, ວິທີການຮຽນ-ການສອນ.

ຄູຝຶກວິຊາຊີບ ແລະ ພັດທະນາສີມືແຮງງານໃຫ້ຄົນພິການ ຕ້ອງໄດ້ຮັບການຍົກລະດັບຄວາມຮູ້, ຄວາມສາມາດ ແລະ ເຕັກນິກ ທີ່ເໝາະສົມ.

### ມາດຕາ 37 ການສະໜັບສະໜູນໃນການຝຶກວິຊາຊີບ ແລະ ພັດທະນາສີມືແຮງງານ

ຄົນພິການ ໄດ້ຮັບນະໂຍບາຍ ຍົກເວັ້ນ ຫຼື ຫຼຸດຜ່ອນ ຄ່າ ຮຽນ, ທີ່ພັກ ແລະ ນຳໃຊ້ອຸປະກອນ ໃນການຝຶກວິຊາຊີບ ແລະ ພັດທະນາສີມືແຮງງານ.

ສະຖານທີ່ຝຶກວິຊາຊີບ ແລະ ສູນພັດທະນາສີມືແຮງງານ ມີໜ້າທີ່ໃຫ້ຄຳປຶກສາ, ແນະນຳການເລືອກ ແລະ ການປະກອບອາຊີບທີ່ເໝາະສົມ ໃຫ້ແກ່ຄົນພິການ.

### ມາດຕາ 38 ການມີວຽກເຮັດງານທຳ

ຄົນພິການ ສາມາດເຂົ້າເຮັດວຽກໃນຫົວໜ່ວຍແຮງງານ, ອົງການຈັດຕັ້ງຂອງ ລັດ ແລະ ເອກະຊົນ ລວມທັງອົງການຈັດຕັ້ງສາກົນ ແລະ ຕ່າງປະເທດ ຢູ່ ສປປ ລາວ ຕາມຄວາມຮູ້, ຄວາມສາມາດ ຂອງຕົນ ໂດຍໄດ້ຮັບ ຄ່າຕອບແທນ, ເງິນເດືອນ, ການເລື່ອນ ຊັ້ນ, ຕຳແໜ່ງ, ການຍົກລະດັບ ແລະ ສະຫວັດດີການ ຢ່າງສະເໝີພາບກັບຄົນອື່ນ.

ຫົວໜ່ວຍແຮງງານ, ອົງການຈັດຕັ້ງຂອງ ລັດ ແລະ ເອກະຊົນ ລວມທັງອົງການຈັດຕັ້ງສາກົນ ແລະ ຕ່າງປະເທດ ຢູ່ ສປປ ລາວ ຕ້ອງສ້າງເງື່ອນໄຂໃຫ້ຄົນພິການ ໄດ້ສະໝັກເຂົ້າເຮັດວຽກ ແລະ ໄດ້ຮັບບູລິມະສິດ ໃນການພິຈາລະນາຮັບເຂົ້າເຮັດວຽກ ຕາມຕໍາແໜ່ງງານ ທີ່ເໝາະສົມກັບ ຄວາມຮູ້, ຄວາມສາມາດ ແລະ ຄວາມຊໍານານງານ ພ້ອມທັງປະກອບສິ່ງອໍານວຍຄວາມສະດວກຂັ້ນພື້ນຖານ ສໍາລັບຄົນພິການໃນສະຖານທີ່ເຮັດວຽກ.

### ມາດຕາ 39 ການສົ່ງເສີມທຸລະກິດຂອງຄົນພິການ

ຄົນພິການ ທີ່ດໍາເນີນທຸລະກິດ ດ້ວຍຕົນເອງ, ເປັນກຸ່ມການຜະລິດ ຫຼື ການບໍລິການໃດໜຶ່ງ ຈະໄດ້ຮັບນະໂຍບາຍ ການເຂົ້າເຖິງແຫຼ່ງທຶນ, ການຂະຫຍາຍການລົງທຶນ, ດ້ານພາສີ ແລະ ອາກອນ ລວມທັງໄດ້ຮັບການຖ່າຍທອດ ແລະ ແນະນໍາ ດ້ານເຕັກນິກ, ເຕັກໂນໂລຊີ ກ່ຽວກັບ ການຜະລິດ, ການບໍລິການ ແລະ ການຕະຫຼາດ ຕາມຄວາມເໝາະສົມ.

ສໍາລັບນະໂຍບາຍການເຂົ້າເຖິງແຫຼ່ງທຶນ ຄົນພິການ ທີ່ດໍາເນີນທຸລະກິດ ດ້ວຍຕົນເອງ, ເປັນກຸ່ມການຜະລິດ ຫຼື ການບໍລິການໃດໜຶ່ງ ສາມາດເຂົ້າເຖິງແຫຼ່ງທຶນ ໂດຍການກູ້ຢືມເງິນນໍາທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ຢູ່ ສປປ ລາວ ຕາມກົດໝາຍທີ່ກ່ຽວຂ້ອງ.

ສໍາລັບນະໂຍບາຍດ້ານພາສີນັ້ນ ຄົນພິການທີ່ດໍາເນີນທຸລະກິດ ດ້ວຍຕົນເອງ, ເປັນກຸ່ມການຜະລິດ ຫຼື ການບໍລິການໃດໜຶ່ງ ຈະໄດ້ຮັບການຍົກເວັ້ນພາສີນໍາເຂົ້າ ວັດຖຸດິບ, ວັດຖຸປະກອບ, ຊິ້ນສ່ວນປະກອບ ແລະ ພາຫະນະກົນຈັກຮັບໃຊ້ການຜະລິດໂດຍກົງ, ສ່ວນນະໂຍບາຍດ້ານອາກອນ ຈະໄດ້ຮັບການຍົກເວັ້ນອາກອນກໍາໄລ, ອາກອນລາຍໄດ້, ອາກອນຊົມໃຊ້ ຕາມກົດໝາຍທີ່ກ່ຽວຂ້ອງ.

ລາຍລະອຽດກ່ຽວກັບນະໂຍບາຍ ການເຂົ້າເຖິງແຫຼ່ງທຶນ, ການຂະຫຍາຍການລົງທຶນ, ດ້ານ ພາສີ ແລະ ອາກອນ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 5
## ການຊ່ວຍເຫຼືອຄົນພິການ

### ມາດຕາ 40 ການຊ່ວຍເຫຼືອ ເບິ່ງແຍງ ຄົນພິການ

ຄອບຄົວ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕ້ອງມີສ່ວນຮ່ວມໃນການຊ່ວຍເຫຼືອ, ເບິ່ງແຍງ, ລ້ຽງດູ ແລະ ປັບປຸງຊີວິດການເປັນຢູ່ຂັ້ນພື້ນຖານຂອງຄົນພິການ ເປັນຕົ້ນ ການສະໜອງ ອາຫານ, ເຄື່ອງນຸ່ງຫົ່ມ, ທີ່ຢູ່ອາໄສ, ປິ່ນປົວພະຍາດ, ການສ້າງສິ່ງອໍານວຍຄວາມສະດວກ ແລະ ຄວາມປອດໄພ.

ໃນກໍລະນີ ມີຄວາມສ່ຽງ ແລະ ອຸກເສີນ ຫຼື ເສຍຊີວິດນັ້ນ ຄອບຄົວ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກໍຕ້ອງເອົາໃຈໃສ່ ແລະ ໃຫ້ການຊ່ວຍເຫຼືອ ຢ່າງທັນການ.

### ມາດຕາ 41 ການອຸດໜູນລ້ຽງດູຄົນພິການ

ຄົນພິການທີ່ ທຸກຍາກ, ອະນາຖາ ຫຼື ບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ຈະໄດ້ຮັບການອຸດໜູນລ້ຽງດູ ລວມທັງໄດ້ຮັບການຊ່ວຍເຫຼືອຈາກ ຄອບຄົວ, ສັງຄົມ ແລະ ລັດ ຕາມທີ່ໄດ້ກໍານົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

ຂະແໜງການຄຸ້ມຄອງວຽກງານຄົນພິການ ຕ້ອງປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດການອຸດໜູນລ້ຽງດູ.

## ໝວດທີ 6
## ການເຂົ້າເຖິງ ຂໍ້ມູນ ຂ່າວສານ ແລະ ການສື່ສານ

**ມາດຕາ 42 ການເຂົ້າເຖິງຂໍ້ມູນ ຂ່າວສານ**

ຄົນພິການ ສາມາດເຂົ້າເຖິງ ຂໍ້ມູນ ຂ່າວສານ ໂດຍຜ່ານສື່ສິ່ງພິມ, ສື່ເອເລັກໂຕຣນິກ, ເຕັກໂນໂລຊີທີ່ທັນສະໄໝ ແລະ ສື່ອື່ນ ຕາມຄວາມເໝາະສົມ.

ການຈັດຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕ້ອງສ້າງເງື່ອນໄຂໃຫ້ຄົນພິການສາມາດເຂົ້າເຖິງ ຂໍ້ມູນ ຂ່າວສານ ແລະ ສະໜອງຂໍ້ມູນ ຂ່າວສານທີ່ຈຳເປັນ ເປັນຕົ້ນ ການບໍລິການຟື້ນຟູໜ້າທີ່ການ, ສະຖານທີ່ໃຫ້ຄວາມຊ່ວຍເຫຼືອດ້ານ ອຸປະກອນ, ເຄື່ອງຄ້ຳຊູ ແລະ ເຄື່ອງຊ່ວຍຊູ, ການປິ່ນປົວສຸຂະພາບ, ການສຶກສາ ແລະ ການມີວຽກເຮັດງານທຳ.

**ມາດຕາ 43 ການເຂົ້າເຖິງການສື່ສານ**

ຄົນພິການ ສາມາດເຂົ້າເຖິງການບໍລິການສື່ສານ ດ້ານໂທລະຄົມມະນາຄົມ ເປັນຕົ້ນ ການບໍລິການໄປສະນີ, ການບໍລິການອິນເຕີເນັດ, ການບໍລິການສື່ສານອື່ນ ທີ່ຈຳເປັນ ແລະ ເໝາະສົມ.

ຜູ້ໃຫ້ບໍລິການສື່ສານດ້ານໂທລະຄົມມະນາຄົມ ຕ້ອງສ້າງເງື່ອນໄຂໃຫ້ຄົນພິການສາມາດເຂົ້າເຖິງການບໍລິການດັ່ງກ່າວ.

## ໝວດທີ 7
## ການເຂົ້າເຖິງ ອາຄານ, ສະຖານທີ່ ແລະ ການຂົນສົ່ງ ສາທາລະນະ

**ມາດຕາ 44 ການເຂົ້າເຖິງ ອາຄານ, ສະຖານທີ່ ສາທາລະນະ**

ຄົນພິການ ສາມາດເຂົ້າເຖິງ ອາຄານ, ສະຖານທີ່ ສາທາລະນະ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເປັນເຈົ້າຂອງອາຄານ, ສະຖານທີ່ນັ້ນ ຕ້ອງສ້າງ, ຕິດຕັ້ງ ຫຼື ປັບປຸງ ສິ່ງອຳນວຍຄວາມສະດວກ ສຳລັບຄົນພິການ ເປັນຕົ້ນ ທາງຍ່າງ, ທາງເປີ້ນ, ຮາວຂັ້ນໄດ, ລິບ, ຫ້ອງນ້ຳ, ສະຖານທີ່ຈອດລົດ, ສັນຍາລັກ, ເຄື່ອງໝາຍຊີ້ບອກອື່ນ.

**ມາດຕາ 45 ການເຂົ້າເຖິງການຂົນສົ່ງສາທາລະນະ**

ຄົນພິການ ສາມາດເຂົ້າເຖິງການຂົນສົ່ງສາທາລະນະ ໃນການເດີນທາງ ໄດ້ຢ່າງສະດວກ, ປອດໄພ ແລະ ໄດ້ຮັບການຍົກເວັ້ນ ຫຼື ຫຼຸດຜ່ອນ ຄ່າໂດຍສານ ແລະ ຄ່າບໍລິການ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເປັນເຈົ້າຂອງການຂົນສົ່ງສາທາລະນະ ຕ້ອງສ້າງ, ຕິດຕັ້ງ ຫຼື ປັບປຸງ ສິ່ງອຳນວຍຄວາມສະດວກ ສຳລັບຄົນພິການ ເປັນຕົ້ນ ການຂຶ້ນ ຫຼື ລົງ ຍານພາຫະນະ, ການຈັດສັນບ່ອນນັ່ງສະເພາະ, ການບໍລິການໃນລະບົບຂົນສົ່ງສາທາລະນະ.

## ພາກທີ V
## ການຄົ້ນຄວ້າວິທະຍາສາດ ແລະ ການຜະລິດອຸປະກອນ
## ກ່ຽວກັບຄົນພິການ

### ມາດຕາ 46 ການຄົ້ນຄວ້າວິທະຍາສາດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ສາມາດຄົ້ນຄວ້າວິທະຍາສາດ ກ່ຽວກັບຄົນພິການ ເປັນຕົ້ນ ການຄົ້ນຄວ້າສາເຫດ ແລະ ວິທີແກ້ໄຂຄວາມພິການ, ການບໍາບັດ, ດັດແປງ ແລະ ຕົບແຕ່ງ ຮ່າງກາຍ, ການປະດິດ ແລະ ອອກແບບ ອຸປະກອນ ກ່ຽວກັບຄົນພິການ ດ້ວຍການໃຊ້ເຕັກນິກທີ່ທັນສະໄໝ.

### ມາດຕາ 47 ການຜະລິດອຸປະກອນ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ສາມາດຜະລິດ ອຸປະກອນ, ເຄື່ອງຄໍ້າຊູ ແລະ ເຄື່ອງຊ່ວຍຊູ ເພື່ອຊ່ວຍເຫຼືອຄົນພິການໃນການດໍາລົງຊີວິດ, ການສຶກສາ ແລະ ການເຄື່ອນໄຫວວຽກງານ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລົງທຶນເຂົ້າໃນການຜະລິດ ອຸປະກອນ, ເຄື່ອງຄໍ້າຊູ ແລະ ເຄື່ອງຊ່ວຍຊູ ຈະໄດ້ຮັບນະໂຍບາຍ ການເຂົ້າເຖິງແຫຼ່ງທຶນ, ນະໂຍບາຍດ້ານພາສີ, ອາກອນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ ເປັນຕົ້ນ ການນໍາເຂົ້າ ວັດຖຸດິບ, ອຸປະກອນ, ເຄື່ອງປະກອບ, ພາຫະນະທີ່ຈໍາເປັນ ເພື່ອນໍາໃຊ້ເຂົ້າໃນການຜະລິດ ອຸປະກອນ, ເຄື່ອງຄໍ້າຊູ ແລະ ເຄື່ອງຊ່ວຍຊູ.

## ພາກທີ VI
## ຄະນະກໍາມະການແຫ່ງຊາດເພື່ອຄົນພິການ
## ແລະ ການຈັດຕັ້ງສັງຄົມຂອງຄົນພິການ
## ໝວດທີ 1
## ຄະນະກໍາມະການແຫ່ງຊາດເພື່ອຄົນພິການ

### ມາດຕາ 48 ຄະນະກໍາມະການແຫ່ງຊາດເພື່ອຄົນພິການ

ຄະນະກໍາມະການແຫ່ງຊາດເພື່ອຄົນພິການ ແມ່ນ ການຈັດຕັ້ງທີ່ບໍ່ປະຈໍາການ, ມີພາລະບົດບາດ ໃນການປະສານສົມທົບ ກັບພາຍໃນ ແລະ ຕ່າງປະເທດ ໃນການຊຸກຍູ້ ສົ່ງເສີມວຽກງານຄົນພິການ ໃຫ້ມີປະສິດທິພາບ, ສະດວກ, ວ່ອງໄວ, ມີຄວາມກ້າວໜ້າຂະຫຍາຍຕົວ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

ຄະນະກໍາມະການແຫ່ງຊາດເພື່ອຄົນພິການ ປະກອບດ້ວຍ ຄະນະກໍາມະການ ເພື່ອຄົນພິການ ຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ.

**ມາດຕາ 49 ໂຄງປະກອບບຸກຄະລາກອນ**

ຄະນະກຳມະການເພື່ອຄົນພິການຂັ້ນສູນກາງ ປະກອບດ້ວຍ:

1. ລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນປະທານ;
2. ຮອງລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຮອງປະທານ ທັງເປັນຜູ້ປະຈຳການ;
3. ຮອງລັດຖະມົນຕີ ກະຊວງສາທາລະນະສຸກ ເປັນຮອງປະທານ;
4. ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ເປັນຮອງປະທານ;
5. ຮອງລັດຖະມົນຕີ ກະຊວງການເງິນ ເປັນກຳມະການ;
6. ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ເປັນກຳມະການ;
7. ຮອງລັດຖະມົນຕີ ກະຊວງການຕ່າງປະເທດ ເປັນກຳມະການ;
8. ຮອງລັດຖະມົນຕີ ກະຊວງຍຸຕິທຳ ເປັນກຳມະການ;
9. ຮອງລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນກຳມະການ;
10. ຮອງລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນກຳມະການ;
11. ຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນກຳມະການ;
12. ຜູ້ຕາງໜ້າ ຈາກການຈັດຕັ້ງສັງຄົມຂອງຄົນພິການ ເປັນກຳມະການ;
13. ຫົວໜ້າກົມນະໂຍບາຍຕໍ່ຜູ້ມີຜົນງານ, ພິການ ແລະ ຜູ້ອາຍຸສູງ ເປັນກຳມະການ ທັງເປັນຫົວໜ້າກອງເລຂາ.

ຄະນະກຳມະການເພື່ອຄົນພິການ ຂັ້ນສູນກາງ ໄດ້ຮັບການແຕ່ງຕັ້ງໂດຍ ນາຍົກລັດຖະມົນຕີ ຕາມການສະເໜີຂອງລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ຖືເອົາ ກົມນະໂຍບາຍຕໍ່ຜູ້ມີຜົນງານ, ພິການ ແລະ ຜູ້ອາຍຸສູງ ເປັນຫ້ອງການຂອງກອງເລຂາຄະນະກຳມະການແຫ່ງຊາດເພື່ອຄົນພິການ.

ສຳລັບ ຄະນະກຳມະການເພື່ອຄົນພິການ ຂັ້ນແຂວງ ແລະ ຂັ້ນເມືອງ ໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເປັນຜູ້ກຳນົດ ແລະ ແຕ່ງຕັ້ງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍອີງໃສ່ສະພາບຕົວຈິງ ເພື່ອຊຸກຍູ້ ສົ່ງເສີມ ວຽກງານຄົນພິການ ພາຍໃນທ້ອງຖິ່ນຂອງຕົນ.

**ມາດຕາ 50 ສິດ ແລະ ໜ້າທີ່ ຂອງຄະນະກຳມະການແຫ່ງຊາດເພື່ອຄົນພິການ**

ຄະນະກຳມະການເພື່ອຄົນພິການຂັ້ນສູນກາງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສຶກສາ, ຄົ້ນຄວ້າ ແນວທາງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄົນພິການ;
2. ໂຄສະນາ ເຜີຍແຜ່ ແນວທາງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄົນພິການ ເພື່ອປຸກລະດົມທົ່ວສັງຄົມ ໃຫ້ມີຄວາມຮັບຮູ້, ເຂົ້າໃຈ ແລະ ປະກອບສ່ວນເຂົ້າໃນການພັດທະນາວຽກງານຄົນພິການ;
3. ຄົ້ນຄວ້າ ແລະ ນຳສະເໜີ ອົງການຄຸ້ມຄອງວຽກງານຄົນພິການ ກ່ຽວກັບການກຳນົດກົນໄກການຊຸກຍູ້ ສົ່ງເສີມ ວຽກງານຄົນພິການ ແຕ່ສູນກາງລົງຮອດຮາກຖານທ້ອງຖິ່ນ;
4. ຄົ້ນຄວ້າສົນທິສັນຍາ, ສັນຍາ, ອະນຸສັນຍາ, ຖະແຫຼງການ ແລະ ເອກະສານອື່ນ ຂອງສາກົນ ກ່ຽວກັບຄົນພິການ ເພື່ອນຳສະເໜີລັດຖະບານ ພິຈາລະນາ;

5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ ແລະ ເອກະຊົນ ໃນການຈັດຕັ້ງປະຕິບັດ ສົນທິສັນຍາ, ສັນຍາ, ອະນຸສັນຍາ, ຖະແຫຼງການ ແລະ ເອກະສານອື່ນ ຂອງສາກົນ ກ່ຽວກັບຄົນພິການ ທີ່ ສປປ ລາວ ເປັນພາຄີ;

6. ພົວພັນ ແລະ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການຊຸກຍູ້ ສົ່ງເສີມ ວຽກງານຄົນພິການ ຕາມການມອບໝາຍ;

7. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ ລັດຖະບານຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ຫຼື ຕາມການມອບໝາຍ.

ສຳລັບ ສິດ ແລະ ໜ້າທີ່ຂອງຄະນະກຳມະການເພື່ອຄົນພິການ ຂັ້ນແຂວງ ແລະ ຂັ້ນເມືອງ ໃຫ້ອົງການປົກຄອງ ຂັ້ນແຂວງ ແລະ ຂັ້ນເມືອງ ເປັນຜູ້ກຳນົດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍສອດຄ່ອງກັບ ສິດ ແລະ ໜ້າທີ່ ຂອງຄະນະກຳມະການເພື່ອຄົນພິການຂັ້ນສູນກາງ.

**ມາດຕາ 51 ກອງປະຊຸມ ຄະນະກຳມະການແຫ່ງຊາດເພື່ອຄົນພິການ**

ກອງປະຊຸມ ຄະນະກຳມະການແຫ່ງຊາດເພື່ອຄົນພິການ ປະກອບດ້ວຍ ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ.

ກອງປະຊຸມສາມັນຈັດຂຶ້ນ ປີລະ ໜຶ່ງຄັ້ງ ໂດຍການເປັນປະທານ ຂອງປະທານຄະນະກຳມະການ ເພື່ອຄົນພິການ ແຕ່ລະຂັ້ນ ເພື່ອພິຈາລະນາ ແລະ ຕົກລົງບັນຫາສຳຄັນຕ່າງໆ ກ່ຽວກັບການຊຸກຍູ້ ແລະ ສົ່ງເສີມ ວຽກງານຄົນພິການ ສຳລັບຄະນະກຳມະການເພື່ອຄົນພິການ ແຕ່ລະຂັ້ນ ແລະ ວຽກງານກອງທຶນຄົນພິການ ສຳລັບຄະນະກຳມະການເພື່ອຄົນພິການຂັ້ນສູນກາງ.

ກອງປະຊຸມວິສາມັນ ຈັດຂຶ້ນເມື່ອໃດກໍໄດ້ ເພື່ອພິຈາລະນາບັນຫາຈຳເປັນ, ສຳຄັນ ແລະ ຮີບດ່ວນ ຕາມການຮຽກໂຮມ ແລະ ເປັນປະທານ ຂອງປະທານຄະນະກຳມະການເພື່ອຄົນພິການ ແຕ່ລະຂັ້ນ ຫຼື ຕາມການສະເໜີຂອງຫົວໜ້າກອງເລຂາ.

ກອງປະຊຸມຄະນະກຳມະການເພື່ອຄົນພິການ ແຕ່ລະຂັ້ນ ຈະເປີດຂຶ້ນໄດ້ກໍຕໍ່ເມື່ອມີຄະນະກຳມະການເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມ ຂອງຈຳນວນທັງໝົດ.

ມະຕິຂອງກອງປະຊຸມ ຈະມີຜົນສັກສິດ ກໍຕໍ່ເມື່ອໄດ້ຮັບຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງ ຂອງຈຳນວນສະມາຊິກທີ່ເຂົ້າຮ່ວມ. ໃນກໍລະນີ ມີຄະແນນສຽງເທົ່າກັນນັ້ນ ຄະແນນສຽງຂອງປະທານ ເປັນສຽງຊີ້ຂາດ.

## ໝວດທີ 2
## ການຈັດຕັ້ງສັງຄົມຂອງຄົນພິການ

**ມາດຕາ 52 ການຈັດຕັ້ງສັງຄົມຂອງຄົນພິການ**

ການຈັດຕັ້ງສັງຄົມຂອງຄົນພິການ ແມ່ນ ສະມາຄົມ, ມູນນິທິ, ສະໂມສອນ ຫຼື ຮູບການຈັດຕັ້ງອື່ນຂອງຄົນພິການ ຊຶ່ງໄດ້ຮັບອະນຸຍາດສ້າງຕັ້ງໂດຍລັດຖະບານ, ມີພາລະບົດບາດເປັນຕົວແທນ ແລະ ເຕົ້າໂຮມຄວາມສາມັກຄີຄົນພິການ ເພື່ອຊຸກຍູ້, ສົ່ງເສີມ ການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຄົນພິການ.

**ມາດຕາ 53 ສິດ ແລະ ໜ້າທີ່ ຂອງການຈັດຕັ້ງສັງຄົມຂອງຄົນພິການ**

ການຈັດຕັ້ງສັງຄົມຂອງຄົນພິການ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງແຜນການເຄື່ອນໄຫວຂອງຕົນ ໃນແຕ່ລະໄລຍະ ໂດຍມີການປະສານສົມທົບກັບ ອົງການຄຸ້ມຄອງວຽກງານຄົນພິການ, ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;

2. ຊຸກຍູ້, ສົ່ງເສີມ ວຽກງານຄົນພິການໃຫ້ມີການຂະຫຍາຍຕົວ, ມີຄວາມສະດວກ, ວ່ອງໄວ ແລະ ມີປະສິດທິຜົນ;

3. ຄົ້ນຄວ້າວິທີການ, ປະສານສົມທົບ, ຕິດຕາມ ແລະ ແກ້ໄຂບັນຫາ ທີ່ເປັນອຸປະສັກໃຫ້ແກ່ການເຄື່ອນໄຫວວຽກງານຄົນພິການ;

4. ພົວພັນ ແລະ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການເຄື່ອນໄຫວວຽກງານຂອງຕົນ ຕາມການມອບໝາຍ;

5. ປະເມີນຜົນ, ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄົນພິການ ຕໍ່ອົງການຄຸ້ມຄອງວຽກງານຄົນພິການ ຢ່າງເປັນປົກກະຕິ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

## ພາກທີ VII
## ກອງທຶນຄົນພິການ

**ມາດຕາ 54 ກອງທຶນຄົນພິການ**

ກອງທຶນຄົນພິການ ແມ່ນ ກອງທຶນທີ່ສ້າງຕັ້ງຂຶ້ນ ເພື່ອຮັບໃຊ້ສະເພາະວຽກງານຄົນພິການ ເປັນຕົ້ນ ການຝຶກວິຊາຊີບ, ການພັດທະນາສີມືແຮງງານ ແລະ ການປະກອບອາຊີບ, ການຊ່ວຍເຫຼືອຄົນພິການ ໃນກໍລະນີ ສຸກເສີນ, ມີຄວາມສ່ຽງ, ການອຸດໜູນລ້ຽງດູຄົນພິການ ທີ່ຢູ່ໃນຄອບຄົວ ທຸກຍາກ, ອະນາຖາ ແລະ ບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ຫຼື ສະຫວັດດີການອື່ນທີ່ຈຳເປັນ.

**ມາດຕາ 55 ແຫຼ່ງລາຍຮັບຂອງກອງທຶນ**

ແຫຼ່ງລາຍຮັບຂອງກອງທຶນຄົນພິການ ໄດ້ຈາກ:

1. ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງອື່ນ ທັງພາຍໃນ ແລະ ຕ່າງປະເທດ;
2. ການປະກອບສ່ວນງົບປະມານຂອງລັດ;
3. ການເຄື່ອນໄຫວກິດຈະກຳ ກ່ຽວກັບຄົນພິການ;
4. ລາຍຮັບອື່ນທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 56 ເປົ້າໝາຍການນຳໃຊ້ກອງທຶນ**

ກອງທຶນຄົນພິການ ນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ການຝຶກວິຊາຊີບ, ພັດທະນາສີມືແຮງງານ ແລະ ການປະກອບອາຊີບ;
2. ການຊ່ວຍເຫຼືອຄົນພິການ ໃນກໍລະນີສຸກເສີນ ແລະ ມີຄວາມສ່ຽງ;

3. ການອຸດໜູນລ້ຽງດູຄົນພິການ ທີ່ຢູ່ໃນຄອບຄົວ ທຸກຍາກ, ອະນາຖາ ແລະ ບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ລວມທັງການເສຍຊີວິດຂອງຄົນພິການ;

4. ເປົ້າໝາຍອື່ນ.

**ມາດຕາ 57 ການຄຸ້ມຄອງບໍລິຫານກອງທຶນ**

ຄະນະກຳມະການແຫ່ງຊາດເພື່ອຄົນພິການ ເປັນຜູ້ຄຸ້ມຄອງບໍລິຫານກອງທຶນຄົນພິການ ໂດຍແມ່ນກອງເລຂາຂອງຄະນະກຳມະການດັ່ງກ່າວ ເປັນກົງຈັກຊ່ວຍວຽກ ຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

ສຳລັບລາຍລະອຽດກ່ຽວກັບການຄຸ້ມຄອງບໍລິຫານກອງທຶນຄົນພິການ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ VIII
## ຂໍ້ຫ້າມ

**ມາດຕາ 58 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ຈຳແນກຄົນພິການ ຫຼື ຈຳກັດການສະແດງຄຳເຫັນຂອງຄົນພິການ;

2. ທໍລະມານ, ໃຊ້ຄວາມຮຸນແຮງ, ຂູດຮີດ ຄົນພິການ ແລະ ສະແຫວງຫາຜົນປະໂຫຍດຈາກຄົນພິການ;

3. ບໍ່ເຄົາລົບຊີວິດສ່ວນຕົວ, ຄອບຄົວ ແລະ ທີ່ຢູ່ອາໄສ ຂອງຄົນພິການ;

4. ຈຳກັດ ການດຳລົງຊີວິດ ແລະ ການປູ່ຮ່ວມກັບຊຸມຊົນ ຂອງຄົນພິການ;

5. ສ້າງອຸປະສັກ, ກີດຂວາງ, ເມີນເສີຍ ຕໍ່ການປະຕິບັດວຽກງານ ຂອງພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ;

6. ໃຫ້ ຫຼື ຮັບ, ເປັນສື່ກາງໃນການ ໃຫ້ ຫຼື ຮັບ ສິນບົນ ແກ່ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ;

7. ໂຄສະນາ ເຜີຍແຜ່ ຫຼື ສະໜອງຂໍ້ມູນ ໃນທາງບິດເບືອນ, ເສື່ອມເສຍ ກ່ຽວກັບຄົນພິການ ແລະ ວຽກງານຄົນພິການ;

8. ຈຳແນກ, ໝິ່ນປະໝາດ ແລະ ໃສ່ຮ້າຍປ້າຍສີ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເຄື່ອນໄຫວວຽກງານຄົນພິການ;

9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 59 ຂໍ້ຫ້າມສຳລັບ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ**

ຫ້າມ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ ມີ ພຶດຕິກຳ ດັ່ງນີ້:

1. ຈຳກັດ ການເຄື່ອນຍ້າຍ ແລະ ການຖືສັນຊາດ ຂອງຄົນພິການ;

2. ສວຍໃຊ້ ສິດ, ໜ້າທີ່ ແລະ ຕຳແໜ່ງ, ກົດໜ່ວງ, ຖ່ວງດຶງ, ຮຽກເອົາສິນບົນ ເພື່ອຜົນປະໂຫຍດສ່ວນຕົວ, ຄອບຄົວ ຫຼື ໝູ່ເພື່ອນ ຊຶ່ງສ້າງຄວາມເສຍຫາຍແກ່ຜົນປະໂຫຍດຂອງ ລັດ, ລວມໝູ່ ຫຼື ບຸກຄົນ;

3. ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເມີນເມີ້, ເມີນເສີຍ, ຂາດຄວາມຮັບຜິດຊອບ ຫຼື ຂາດຈັນຍາບັນ ທີ່ກໍ່ຄວາມເສຍຫາຍ ຕໍ່ ລັດ, ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ;

4. ຮຽກ ຫຼື ທວງ ເອົາຄ່າທຳນຽມ, ຄ່າບໍລິການ ຫຼື ນຳໃຊ້ລາຍຮັບວິຊາການ ກ່ຽວກັບວຽກງານຄົນພິການ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

5. ເປີດເຜີຍ ຂໍ້ມູນສ່ວນບຸກຄົນຂອງຄົນພິການ ຫຼື ຄວາມລັບທາງລັດຖະການ, ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານຄົນພິການ ໂດຍບໍ່ໄດ້ຮັບອະນຸຍາດ;

6. ອອກເອກະສານ ກ່ຽວກັບຄົນພິການ, ຄວາມພິການ ບໍ່ຖືກຕ້ອງ ລວມທັງການປອມແປງເອກະສານດັ່ງກ່າວ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ IX
## ການແກ້ໄຂຂໍ້ຂັດແຍ່ງ

### ມາດຕາ 60 ຮູບການແກ້ໄຂຂໍ້ຂັດແຍ່ງ

ການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບວຽກງານຄົນພິການ ສາມາດດຳເນີນດ້ວຍຮູບການ ໃດໜຶ່ງ ດັ່ງນີ້:

1. ການປະນີປະນອມ ຫຼື ການໄກ່ເກ່ຍ;
2. ການແກ້ໄຂທາງບໍລິຫານ;
3. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງດ້ານເສດຖະກິດ;
4. ການຕັດສິນຂອງສານປະຊາຊົນ;
5. ການແກ້ໄຂທີ່ມີລັກສະນະສາກົນ.

### ມາດຕາ 61 ການປະນີປະນອມ ຫຼື ການໄກ່ເກ່ຍ

ໃນກໍລະນີເກີດມີຂໍ້ຂັດແຍ່ງ ກ່ຽວກັບວຽກງານຄົນພິການ, ຄູ່ກໍລະນີ ສາມາດປຶກສາຫາລື, ເຈລະຈາ, ປະນີປະນອມ ຫຼື ໄກ່ເກ່ຍກັນ.

### ມາດຕາ 62 ການແກ້ໄຂທາງບໍລິຫານ

ໃນກໍລະນີເກີດມີຂໍ້ຂັດແຍ່ງ ກ່ຽວກັບວຽກງານຄົນພິການ, ຄູ່ກໍລະນີ ສາມາດສະເໜີຕໍ່ອົງການຄຸ້ມຄອງວຽກງານຄົນພິການ ພິຈາລະນາແກ້ໄຂຕາມກົດໝາຍ, ອົງການດັ່ງກ່າວ ຕ້ອງແກ້ໄຂຄຳສະເໜີນັ້ນ ພາຍໃນເວລາຊາວວັນ, ຖ້າບໍ່ສາມາດແກ້ໄຂໄດ້ພາຍໃນເວລາດັ່ງກ່າວ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຄູ່ກໍລະນີ.

### ມາດຕາ 63 ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ໃນກໍລະນີເກີດມີຂໍ້ຂັດແຍ່ງ ກ່ຽວກັບວຽກງານຄົນພິການ, ຄູ່ກໍລະນີ ສາມາດສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາແກ້ໄຂຕາມກົດໝາຍ.

**ມາດຕາ 64 ການຕັດສິນຂອງສານປະຊາຊົນ**

ໃນກໍລະນີເກີດມີຂໍ້ຂັດແຍ່ງ ກ່ຽວກັບວຽກງານຄົນພິການ, ຄູ່ກໍລະນີ ຝ່າຍໃດ ຝ່າຍໜຶ່ງ ສາມາດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສິນຕາມກົດໝາຍ.

**ມາດຕາ 65 ການແກ້ໄຂທີ່ມີລັກສະນະສາກົນ**

ໃນກໍລະນີເກີດມີຂໍ້ຂັດແຍ່ງ ກ່ຽວກັບວຽກງານຄົນພິການ ທີ່ມີລັກສະນະສາກົນ, ຄູ່ກໍລະນີ ສາມາດສະເໜີ ຕໍ່ອົງການແກ້ໄຂຂໍ້ຂັດແຍ່ງ ພາຍໃນ, ຕ່າງປະເທດ ພິຈາລະນາແກ້ໄຂ ຫຼື ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ X
## ການຄຸ້ມຄອງ ແລະ ກວດກາ ວຽກງານຄົນພິການ
### ໝວດທີ 1
### ການຄຸ້ມຄອງ

**ມາດຕາ 66 ອົງການຄຸ້ມຄອງວຽກງານຄົນພິການ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານຄົນພິການ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງສາທາລະນະສຸກ, ກະຊວງສຶກສາທິການ ແລະ ກິລາ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດວຽກງານ ດັ່ງກ່າວ.

ອົງການຄຸ້ມຄອງວຽກງານຄົນພິການ ປະກອບດ້ວຍ:

1. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
2. ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ, ນະຄອນຫຼວງ;
3. ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 67 ສິດ ແລະ ໜ້າທີ່ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ**

ໃນການຄຸ້ມຄອງວຽກງານຄົນພິການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ຫຼື ປັບປຸງ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານຄົນພິການ ເພື່ອສະເໜີລັດຖະບານ ພິຈາລະນາ;
2. ຫັນນະໂຍບາຍ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານຄົນພິການ ເປັນລະບຽບການ, ແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;
3. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານຄົນພິການ;

4. ຄົ້ນຄວ້າ ແລະ ນຳສະເໜີລັດຖະບານ ພິຈາລະນາການຈັດສັນງົບປະມານຂອງລັດ ເພື່ອປະກອບເຂົ້າໃນກອງທຶນຄົນພິການ;

5. ຊີ້ນຳ ແລະ ຄຸ້ມຄອງ ການຝຶກອົບຮົມວິຊາຊີບ ແລະ ພັດທະນາສີມືແຮງງານ ສຳລັບຄົນພິການ ລວມທັງການຊອກວຽກເຮັດງານທຳ ທີ່ເໝາະສົມ;

6. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຄົນພິການ;

7. ຊີ້ນຳ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານຄົນພິການ ຕາມສາຍຕັ້ງຂອງຕົນໃນຂອບເຂດທົ່ວປະເທດ;

8. ພິຈາລະນາ ການສະເໜີ ສ້າງຕັ້ງ, ຍຸບເລີກ ແລະ ຄຸ້ມຄອງ ການຈັດຕັ້ງສັງຄົມຂອງຄົນພິການ;

9. ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ ບຸກຄະລາກອນ ກ່ຽວກັບວຽກງານຄົນພິການ;

10. ພິຈາລະນາ, ຮັບຮອງ ບົດສະຫຼຸບ ແລະ ແຜນການເຄື່ອນໄຫວວຽກງານ, ງົບປະມານຂອງກອງທຶນຄົນພິການໃນແຕ່ລະໄລຍະ;

11. ຮັບ ແລະ ພິຈາລະນາແກ້ໄຂ ຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານຄົນພິການ;

12. ພົວພັນ ແລະ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄົນພິການ;

13. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄົນພິການ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 68 ສິດ ແລະ ໜ້າທີ່ ຂອງພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານຄົນພິການ ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຄົນພິການ;

2. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄົນພິການ;

3. ຊີ້ນຳ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນເມືອງ ໃນການຈັດຕັ້ງປະຕິບັດວຽກງານຄົນພິການ;

4. ບຳລຸງ ສ້າງ ແລະ ຍົກລະດັບ ບຸກຄະລາກອນ ກ່ຽວກັບວຽກງານຄົນພິການ;

5. ຕິດຕາມ ແລະ ຊຸກຍູ້ ການເຄື່ອນໄຫວວຽກງານການຈັດຕັ້ງສັງຄົມຂອງຄົນພິການ;

6. ຮັບ ແລະ ພິຈາລະນາແກ້ໄຂ ຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານຄົນພິການ;

7. ປະສານສົມທົບກັບພະແນກການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ຕິດຕາມ ແລະ ສົ່ງເສີມວຽກງານຄົນພິການ;

8. ພົວພັນ ແລະ ຮ່ວມມືກັບ ຕ່າງປະເທດ ກ່ຽວກັບວຽກງານຄົນພິການ ຕາມການມອບໝາຍ;

9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄົນພິການ ໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ອົງການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

໑໐.ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ ໖໙ ສິດ ແລະ ໜ້າທີ່ ຂອງຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານຄົນພິການ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງ ປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຄົນພິການ;
2. ຊີ້ນຳ ແລະ ຕິດຕາມ ການຈັດຕັ້ງປະຕິບັດວຽກງານຄົນພິການ;
3. ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄົນພິການ;
4. ຕິດຕາມ ແລະ ຊຸກຍູ້ ການເຄື່ອນໄຫວວຽກງານການຈັດຕັ້ງສັງຄົມຂອງຄົນພິການ;
5. ຮັບ ແລະ ພິຈາລະນາແກ້ໄຂ ຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານຄົນພິການ;
6. ສະເໜີ ບຳລຸງ ສ້າງ ແລະ ຍົກລະດັບ ບຸກຄະລາກອນ ກ່ຽວກັບວຽກງານຄົນພິການ;
7. ປະສານສົມທົບກັບຫ້ອງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ຕິດຕາມ ແລະ ສົ່ງເສີມວຽກງານຄົນພິການ;
8. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄົນພິການ ໃຫ້ພະແນກແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນແຂວງ ແລະ ອົງການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 70 ສິດ ແລະ ໜ້າທີ່ ຂອງກະຊວງສາທາລະນະສຸກ**

ໃນການຄຸ້ມຄອງວຽກງານຄົນພິການ ກະຊວງສາທາລະນະສຸກ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ສະເໜີສ້າງ ຫຼື ປັບປຸງ ນະໂຍບາຍ, ກົດໝາຍ ແລະ ຄົ້ນຄວ້າ ອອກລະບຽບການ ກ່ຽວກັບການປ້ອງກັນບໍ່ໃຫ້ເກີດຄວາມພິການ, ການປິ່ນປົວ ແລະ ຟື້ນຟູສຸຂະພາບ;
2. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ລວມທັງການປຸກຈິດສຳນຶກ ກ່ຽວກັບການປ້ອງກັນບໍ່ໃຫ້ເກີດຄວາມພິການ;
3. ຊີ້ນຳ ແລະ ຄຸ້ມຄອງ ການປ້ອງກັນບໍ່ໃຫ້ເກີດຄວາມພິການ, ສ້າງເງື່ອນໄຂໃຫ້ຄົນພິການໄດ້ເຂົ້າເຖິງການບໍລິການດ້ານສາທາລະນະສຸກ;
4. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານກ່ຽວກັບຄົນພິການຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 71 ສິດ ແລະ ໜ້າທີ່ ຂອງກະຊວງສຶກສາທິການ ແລະ ກິລາ**

ໃນການຄຸ້ມຄອງວຽກງານຄົນພິການ ກະຊວງສຶກສາທິການ ແລະ ກິລາ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ສະເໜີສ້າງ ຫຼື ປັບປຸງ ນະໂຍບາຍ, ກົດໝາຍ ແລະ ຄົ້ນຄວ້າ ອອກລະບຽບການ ກ່ຽວກັບການສຶກສາຮຽນຮ່ວມ, ການກິລາ-ກາຍຍະກຳ, ການຊ່ວຍເຫຼືອສະເພາະດ້ານໃນການສຶກສາ ແລະ ນະໂຍບາຍການສຶກສາ ສຳລັບຄົນພິການ;

2. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບການສຶກສາຮຽນຮ່ວມ, ການຊ່ວຍເຫຼືອສະເພາະດ້ານໃນການສຶກສາ ແລະ ນະໂຍບາຍການສຶກສາສຳລັບຄົນພິການ;

3. ຊີ້ນຳ ແລະ ຄຸ້ມຄອງ ການສ້າງ ຫຼື ປັບປຸງ ຫຼັກສູດການຮຽນ-ການສອນ ໃຫ້ສອດຄ່ອງກັບປະເພດຄົນພິການ ລວມທັງສະໜອງ ຄູສອນ, ວັດຖຸປະກອນ ແລະ ສື່ການຮຽນ-ການສອນ ທີ່ເໝາະສົມ ພ້ອມທັງສ້າງເງື່ອນໄຂໃຫ້ຄົນພິການໄດ້ເຂົ້າເຖິງການສຶກສາ;

4. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານກ່ຽວກັບຄົນພິການຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 72 ສິດ ແລະ ໜ້າທີ່ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ**

ໃນການຄຸ້ມຄອງວຽກງານຄົນພິການ ກະຊວງໂຍທາທິການ ແລະ ຂົນສົ່ງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ສະເໜີສ້າງ ຫຼື ປັບປຸງ ນະໂຍບາຍ, ກົດໝາຍ ແລະ ຄົ້ນຄວ້າ ອອກລະບຽບການ ກ່ຽວກັບການສ້າງສິ່ງອຳນວຍຄວາມສະດວກ ແລະ ປອດໄພ, ການເຂົ້າເຖິງ ອາຄານ, ສະຖານທີ່ ແລະ ການຂົນສົ່ງສາທາລະນະ ສຳລັບຄົນພິການ;

2. ໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບການຈະລາຈອນທາງບົກ ເພື່ອປ້ອງກັນບໍ່ໃຫ້ເກີດອຸບປະຕິເຫດຕາມເສັ້ນທາງ;

3. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານກ່ຽວກັບຄົນພິການຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 73 ສິດ ແລະ ໜ້າທີ່ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

ໃນການຄຸ້ມຄອງວຽກງານຄົນພິການ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ສະເໜີສ້າງ ຫຼື ປັບປຸງ ນະໂຍບາຍ, ກົດໝາຍ ແລະ ຄົ້ນຄວ້າ ອອກລະບຽບການ ກ່ຽວກັບສິລະປະ, ວັດທະນະທຳ, ການພັກຜ່ອນ ແລະ ການເຂົ້າເຖິງສື່ມວນຊົນ ສຳລັບຄົນພິການ;

2. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄົນພິການ;

3. ສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກ ແກ່ຄົນພິການ ສາມາດເຂົ້າຮ່ວມ ແລະ ເຄື່ອນໄຫວສິລະປະ, ວັດທະນະທໍາ, ງານບຸນປະເພນີ, ງານສະເຫຼີມສະຫຼອງ, ງານວາງສະແດງ ຫຼື ການແຂ່ງຂັນ ລວມທັງສ້າງເງື່ອນໄຂ ແລະ ໃຫ້ໂອກາດ ເພື່ອໃຫ້ຄົນພິການສາມາດພັກຜ່ອນ;

4. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານກ່ຽວກັບຄົນພິການຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

5. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

### ມາດຕາ 74 ສິດ ແລະ ໜ້າທີ່ ຂອງກະຊວງການເງິນ

ໃນການຄຸ້ມຄອງວຽກງານຄົນພິການ ກະຊວງການເງິນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ, ຈັດສັນ ງົບປະມານ ສໍາລັບການຈັດຕັ້ງປະຕິບັດ ແຜນງານ, ໂຄງການ ກ່ຽວກັບວຽກງານຄົນພິການ ຕາມການຮັບຮອງຂອງສະພາແຫ່ງຊາດ;

2. ແນະນໍາ, ຕິດຕາມ ກວດກາ ການຈັດຕັ້ງປະຕິບັດລາຍຮັບ-ລາຍຈ່າຍ ງົບປະມານ ຕາມການຮັບຮອງຂອງສະພາແຫ່ງຊາດ ແລະ ຕາມການມອບໝາຍຂອງລັດຖະບານ;

3. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານກ່ຽວກັບຄົນພິການຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

4. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

### ມາດຕາ 75 ສິດ ແລະ ໜ້າທີ່ ຂອງກະຊວງແຜນການ ແລະ ການລົງທຶນ

ໃນການຄຸ້ມຄອງວຽກງານຄົນພິການ ກະຊວງແຜນການ ແລະ ການລົງທຶນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ແລະ ພິຈາລະນາ ບັນຈຸແຜນງານ, ໂຄງການ ກ່ຽວກັບວຽກງານຄົນພິການ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ;

2. ຂົນຂວາຍ ແລະ ລະດົມທຶນ ຈາກຄູ່ຮ່ວມໃນການພັດທະນາ, ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ໃຫ້ລົງທຶນເຂົ້າໃນການສ້າງສິ່ງອໍານວຍຄວາມສະດວກ ແລະ ປອດໄພ, ການຜະລິດເຄື່ອງ ຄໍ້າຊູ ແລະ ຊ່ວຍຊູ ລວມທັງການສຶກສາ, ການຝຶກວິຊາຊີບ ສໍາລັບຄົນພິການ;

3. ຄົ້ນຄວ້າ ແລະ ກໍານົດຮູບແບບການສໍາຫຼວດ ແລະ ເກັບກໍາສະຖິຕິ ກ່ຽວກັບຄົນພິການ ໂດຍມີການປະສານສົມທົບກັບອົງການຄຸ້ມຄອງວຽກງານຄົນພິການ;

4. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານກ່ຽວກັບຄົນພິການຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

5. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

### ມາດຕາ 76 ສິດ ແລະ ໜ້າທີ່ ຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ

ໃນການຄຸ້ມຄອງວຽກງານຄົນພິການ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ສະເໜີສ້າງ ຫຼື ປັບປຸງ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບການຄົ້ນຄວ້າດ້ານວິທະຍາສາດ ແລະ ອຸປະກອນ ສໍາລັບຄົນພິການ;

2. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ກົດໝາຍ ແລະ ລະບຽບການກ່ຽວກັບ ຜົນການຄົ້ນຄວ້າທາງດ້ານວິທະຍາສາດ ແລະ ອຸປະກອນ ສໍາລັບຄົນພິການ ລວມທັງການສ້າງເງື່ອນໄຂໃຫ້ຄົນພິການສາມາດເຂົ້າເຖິງຂໍ້ມູນ ຂ່າວສານ ແລະ ການສື່ສານ;

3. ຊີ້ນໍາ ແລະ ຄຸ້ມຄອງ ການກໍານົດມາດຕະຖານສໍາລັບ ການຜະລິດໂປແກຣມສຽງ, ວັດຖຸປະກອບການສື່ສານ ແລະ ການຜະລິດອຸປະກອນ ກ່ຽວກັບຄົນພິການ ເປັນຕົ້ນ ອົງຄະທຽມ, ຫູາບຂາທຽມ, ຫູາບເລົາເຖິງ, ໄມ້ຄໍ້າເທົ້າ, ເຄື່ອງຄໍ້າຊູ, ເຄື່ອງຊ່ວຍຊູ, ລໍ້ເລື່ອນ, ລໍ້ໂຍກ;

4. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານກ່ຽວກັບຄົນພິການຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

5. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

### ມາດຕາ 77 ສິດ ແລະ ໜ້າທີ່ ຂອງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ

ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແຕ່ລະຂັ້ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບກັບຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ, ຄະນະກໍາມະການແຫ່ງຊາດເພື່ອຄົນພິການ, ການຈັດຕັ້ງສັງຄົມຂອງຄົນພິການ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ ໃນການຄຸ້ມຄອງ ແລະ ພັດທະນາ ຄົນພິການ ເພື່ອເຮັດໃຫ້ວຽກງານຄົນພິການມີການພັດທະນາ, ສາມາດປະກອບສ່ວນເຂົ້າໃນການປົກປ້ອງ ສິດ ແລະ ຜົນປະໂຫຍດ ອັນຊອບທໍາຂອງຄົນພິການ.

## ໝວດທີ 2
## ການກວດກາ

### ມາດຕາ 78 ອົງການກວດກາວຽກງານຄົນພິການ

ອົງການກວດກາວຽກງານຄົນພິການ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານຄົນພິການຕາມທີ່ໄດ້ກໍານົດໄວ້ໃນມາດຕາ 66 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດສອບແຫ່ງລັດ, ອົງການກວດກາລັດຖະບານ, ອົງການກວດກາລັດແຕ່ລະຂັ້ນ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ພົນລະເມືອງ.

### ມາດຕາ 79 ເນື້ອໃນການກວດກາ

ການກວດກາວຽກງານຄົນພິການ ມີ ເນື້ອໃນຕົ້ນຕໍ ດັ່ງນີ້:

1. ການປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄົນພິການ;
2. ການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ ກ່ຽວກັບວຽກງານຄົນພິການ;
3. ການເຄື່ອນໄຫວຂອງບັນດາການຈັດຕັ້ງສັງຄົມຂອງຄົນພິການ.

**ມາດຕາ 80 ຮູບການການກວດກາ**

ການກວດກາວຽກງານຄົນພິການ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນການກວດກາຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;
2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

ການກວດກາວຽກງານຄົນພິການ ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ພາກທີ XI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 81 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມກົດໝາຍ.

**ມາດຕາ 82 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ.

**ມາດຕາ 83 ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ການລະເມີດຂໍ້ຫ້າມ ທີ່ມີລັກສະນະເບົາ, ເປັນການລະເມີດເທື່ອທຳອິດ ແລະ ບໍ່ເປັນການກະທຳຜິດທາງອາຍາ ຈະຖືກກ່າວເຕືອນ ແລະ ສຶກສາອົບຮົມ.

**ມາດຕາ 84 ມາດຕະການທາງວິໄນ**

ພະນັກງານ-ລັດຖະກອນ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກລົງວິໄນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.

**ມາດຕາ 85 ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ເປັນຕົ້ນ ການບໍ່ປະຕິບັດຕາມມາດຕະການສຶກສາອົບຮົມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 83 ຂອງກົດໝາຍສະບັບນີ້ ຈະຖືກປັບໃໝຕາມແຕ່ລະກໍລະນີ.

ອັດຕາປັບໃໝ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ ໘໖ ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ແລະ ກໍ່ຄວາມເສຍຫາຍໃຫ້ແກ່ຜູ້ອື່ນ ຕ້ອງໃຊ້ແທນຄ່າເສຍຫາຍທາງແພ່ງ ຕາມທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ ໘໗ ມາດຕະການທາງອາຍາ**

ບຸກຄົນ, ນິຕິບຸກຄົນ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກລົງໂທດ ຕາມກົດໝາຍແລ້ວແຕ່ກໍລະນີ ເບົາ ຫຼື ໜັກ.

## ພາກທີ XII
## ບົດບັນຍັດສຸດທ້າຍ

**ມາດຕາ ໘໘ ວັນຄົນພິການແຫ່ງຊາດ**

ລັດຖະບານກຳນົດເອົາ ວັນທີ 3 ທັນວາ ເປັນວັນຄົນພິການແຫ່ງຊາດ.

**ມາດຕາ ໘໙ ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ ໙໐ ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນ ປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້